# ຈັດກອງປະຊຸມເຜີຍແຜ່ນິຕິກຳ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ ທີ່ກະຊວງປ້ອງກັນຄວາມສະຫງົບ




ກອງປະຊຸມເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ ທີ່ກະຊວງປ້ອງກັນຄວາມສະຫງົບ ໄດ້ຈັດຂຶ້ນໃນວັນທີ 23 ກັນຍາ 2022 ທີ່ຫ້ອງປະຊຸມຕຶກໃໝ່ ຊັ້ນ V ຈັດຂຶ້ນໂດຍກະຊວງປ້ອງກັນຄວາມສະຫງົບ ຮ່ວມກັບ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໂດຍການໃຫ້ກຽດເປັນປະທານຮ່ວມລະຫວ່າງ ພົນຈັດຕະວາ ໜູຈອນ ກ້ອນທອງດຳ ຮອງຫົວໜ້າກົມໃຫຍ່ພະລາທິການ, ກະຊວງປ້ອງກັນຄວາມສະຫງົບ ແລະ ທ່ານ ນາງ ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່ ບໍລິສັດ ຂສລ ແລະ ມີບັນດາຄະນະພັກ, ຄະນະບັນຊາ, ນາຍຕຳຫຼວດ ຈາກບັນດາກົມກອງອ້ອມຂ້າງ ກະຊວງປ້ອງກັນຄວາມສະຫງົບ, ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ແລະ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເຂົ້າຮ່ວມທັງໝົດຈຳນວນ 50 ກ່ວາທ່ານ.

ຈຸດປະສົງຂອງກອງປະຊຸມແມ່ນຈັດຂຶ້ນເພື່ອເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໄດ້ຮັບຮູ້ເຂົ້າໃຈຄວາມສຳຄັນຈຳເປັນທີ່ຕ້ອງໄດ້ເກັບກຳຂໍ້ມູນ ແລະ ພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອຂອງ ສປປ ລາວ ເພື່ອໃຫ້ສາມາດຕອບສະໜອງຂໍ້ມູນທີ່ຄົບຖ້ວນ, ມີຄຸນນະພາບ ແລະ ຫຼາກຫຼາຍ

ໃຫ້ແກ່ບັນດາສະຖາບັນການເງິນ, ພາກລັດ ແລະ ສັງຄົມ ເພື່ອນຳໃຊ້ເຂົ້າໃນວຽກງານຕ່າງໆຢ່າງມີປະສິດທິພາບ.



ໃນກອງປະຊຸມດັ່ງກ່າວ ທ່ານ ນ. ເພັດລຳພອນ ຄຳນໍເພັດ ຮອງຜູ້ອຳນວຍການ ບໍລິສັດ ຂສລ ກໍໄດ້ນຳສະເໜີ ຄວາມເປັນມາ, ພາລະບົດບາດ ແລະ ຄວາມສຳຄັນຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ ຈາກນັ້ນ, ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ກໍໄດ້ນຳສະເໜີດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019. ເນື້ອໃນກອງປະຊຸມໄດ້ໃຫ້ຮູ້ວ່າ: ເພື່ອເປັນການຈັດຕັ້ງປະຕິບັດຕາມດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ, ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ ແລະ ການປະເມີນຂອງທະນາຄານໂລກ ກ່ຽວກັບສະພາບການດຳເນີນທຸລະກິດ ຢູ່ ສປປ ລາວ ເຊິ່ງພາລະບົດບາດຂອງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນເຮັດໜ້າທີ່ໃນການເກັບກຳຂໍ້ມູນຈາກພາກສ່ວນຕ່າງໆ ທັງອົງການຈັດຕັ້ງລັດ ແລະ ບໍລິສັດ ສາທາລະນຸປະໂພກ. ພ້ອມດຽວກັນນັ້ນ, ກໍຕ້ອງດຳເນີນການຄົ້ນຄວ້າສ້າງຜະລິດຕະພັນທີ່ຫຼາກຫຼາຍຮັບໃຊ້ສັງຄົມ. ສະນັ້ນ, ເພື່ອປະຕິບັດຕາມຄຳສັ່ງ, ລະບຽບການກ່ຽວຂ້ອງ ແລະ ເພື່ອພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ຈຶ່ງມີຄວາມຈຳເປັນຕ້ອງໄດ້ເກັບກຳຂໍ້ມູນຈາກພາກສ່ວນກ່ຽວຂ້ອງຕ່າງໆ ໃນນັ້ນການປັບປຸງຂໍ້ມູນຂ່າວສານສິນເຊື່ອໃຫ້ມີຄຸນນະພາບ ແມ່ນມີຄວາມສຳຄັນໂດຍສະເພາະການລະບຸຕົວຕົນຂອງລູກຄ້າເງິນກູ້ໃຫ້ມີຄວາມຊັດເຈນ ເນື່ອງຈາກປະຈຸບັນ ບໍລິສັດ ຂສລ ໄດ້ຮັບຂໍ້ມູນຂາເຂົ້າຈາກສະມາຊິກ ກໍຄື ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ພຽງຢ່າງດຽວ ແຕ່ຍັງຂາດຂໍ້ມູນຈາກພາກສ່ວນອື່ນມາປຽບທຽບໃຫ້ມີຄວາມຖືກຕ້ອງ ແລະ ມີຄຸນນະພາບ ເປັນຕົ້ນແມ່ນ ເລກບັດປະຈຳຕົວ ແລະ ເລກສຳມະໂນຄົວ ໃນການລະບຸຕົວຕົນລູກຄ້າ

ຂອງທະນາຄານ ແລະ ສະຖາບັນການເງິນ. ສະນັ້ນ, ຈຶ່ງມີຄວາມຈຳເປັນເກັບກຳຂໍ້ມູນຈາກກະຊວງປ້ອງກັນຄວາມສະຫງົບ ທີ່ຄຸ້ມຄອງການອອກເລກບັດປະຈຳຕົວ ແລະ ເລກສຳມະໂນຄົວ ຂອງປະຊາຊົນທົ່ວປະເທດ ເພື່ອນຳໃຊ້ເຂົ້າໃນການປຽບທຽບຂໍ້ມູນໃນຖານຂໍ້ມູນຂ່າວສານສິນເຊື່ອ ໃຫ້ມີຄຸນນະພາບ ເພື່ອເປັນພື້ນຖານໃນການພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ, ປັບປຸງຜະລິດຕະພັນການໃຫ້ຄະແນນສິນເຊື່ອສຳລັບບຸກຄົນ ແລະ ສ້າງຜະລິດຕະພັນການຈັດອັນດັບຄວາມໜ້າເຊື່ອຖືຂອງວິສາຫະກິດ ທັງນີ້ກໍເພື່ອໃຫ້ຂໍ້ມູນຂ່າວສານສິນເຊື່ອກາຍເປັນສູນກາງ ໃນການແລກປ່ຽນຂໍ້ມູນທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອນຳມາສ້າງຜະລິດຕະພັນໃຫ້ໄດ້ຕາມມາດຕະຖານສາກົນ ທີ່ມີຄວາມຄົບຖ້ວນ, ມີຄຸນນະພາບ, ມີຄວາມທັນສະໄໝ, ຮັບປະກັນຄວາມປອດໄພດ້ານຂໍ້ມູນຂ່າວສານສິນເຊື່ອ ກ້າວໄປສູ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນອະນາຄົດ ໃຫ້ສາມາດປະກອບສ່ວນເຂົ້າໃນການກຳນົດນະໂຍ ບາຍເງິນຕາຂອງພາກລັດ ແນ່ໃສ່ເພື່ອຮັກສາຄວາມມີສະຖຽນລະພາບທາງດ້ານການເງິນ-ເງິນຕາ, ຄຸ້ມຄອງບັນດາສະຖາບັນການເງິນ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສັງຄົມສາມາດເຂົ້າເຖິງສິນເຊື່ອໄດ້ງ່າຍຂຶ້ນ ແລະ ສົ່ງເສີມໃຫ້ສັງຄົມມີວິໄນທາງດ້ານການເງິນ ເຊິ່ງຂໍ້ມູນຂ່າວສານສິນເຊື່ອຖືໄດ້ວ່າເປັນຂໍ້ມູນພື້ນຖານໃນການພິຈາລະນາ ເປັນຕົ້ນແມ່ນ: ນຳໃຊ້ເຂົ້າໃນການວິເຄາະຄວາມສ່ຽງທາງດ້ານສິນເຊື່ອກ່ອນການອະນຸມັດເງິນກູ້, ທົບທວນ, ປັບໂຄງສ້າງໜີ້, ແຈ້ງເຕືອນເງິນກູ້ທີ່ມີຄວາມສ່ຽງ, ກຳນົດຜະລິດຕະພັນ, ການຕະຫຼາດຂອງຕົນ ແລະ ນຳໃຊ້ຂໍ້ມູນຂ່າວສານສິນ





ເຊື່ອເຂົ້າໃນວຽກງານອື່ນ ແລະ ໃນຕອນທ້າຍຂອງກອງປະຊຸມ ພົນຈັດຕະວາ ໜູຈອນ ກ້ອນທອງດໍາ ຮອງຫົວໜ້າກົມໃຫຍ່ພະລາທິການ, ກະຊວງປ້ອງກັນຄວາມສະຫງົບ ກໍໄດ້ມີຄໍາເຫັນຕໍ່ກອງປະຊຸມ ເຊິ່ງເຫັນໄດ້ຄວາມສໍາຄັນຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ມີຄໍາເຫັນໃຫ້ກົມກ່ຽວຂ້ອງຂອງກະຊວງ ສືບຕໍ່ໃຫ້ການຮ່ວມມື, ປະສານສົມທົບ ແລະ ເຮັດວຽກຮ່ວມກັນ ເພື່ອສະໜອງຂໍ້ມູນໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ນໍາໃຊ້ຂໍ້ມູນທີ່ກ່ຽວຂ້ອງເຂົ້າໃນວຽກງານຂໍ້ມູນຂ່າວສານສິນເຊື່ອ ຂອງ ສປປ ລາວ.




V ຂອງອົງຄະນະພັກກະຊວງປ້ອງກັນຄວາມສະຫງົບໃຫ້ປະກົດຜົນເປັນຈິງ


ອອກແຮງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ




ອອກແຮງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຢ່າງບໍ່ຢຸດຢັ້ງ





≠ ບົດຂ່າວ: ບໍລິສັດ ຂສລ